ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117
PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 169 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 23 DEC 2022

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງທີ 1 ສົກປີ 2022 (ເພີ່ມເຕີມ)

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນເພີ່ມເຕີມ ຂອງກອງປະຊຸມ ວິສາມັນສະພາບໍລິຫານ ຄັ້ງທີ 01 ສົກປີ 2022 ວັນທີ 22 ທັນວາ 2022 ເພື່ອພິຈາລະນາ ແລະຮັບຮອງວາລະກອງ ປະຊຸມວິສາມັນຜູ້ຖືຮຸ້ນ ສົກປີ 2022 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

ວາລະທີ 01 : ພິຈາລະນາແລະຮັບຮອງການສະສາງຊັບສິນຂອງບໍລິສັດຊີມັງລາວມະຫາຊົນ ທີ່ບໍ່ ກ່ຽວຂ້ອງກັບຂະແໜງການທ່ອງທ່ຽວວັດທະນະທຳ.

ວາລະທີ 02: ພິຈາລະນາ ແລະຮັບຮອງການໂອນຊື່ເຈົ້າຂອງທີ່ດິນສຳນັກງານຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ຈາກຊື່ບຸກຄົນມາອອກຊື່ບໍລິສັດຊີມັງລາວມະຫາຊົນ ຫຼື ຊື່ບໍລິສັດທີ່ຈະ ປ່ຽນຊື່ໃໝ່ຕາມການຕົກລົງຂອງສະພາບໍລິຫານ.

ວາລະທີ 03: ພິຈາລະນາແລະຮັບຮອງ ການຮື້ຖອນ ແລະ ປຸກສ້າງສຳນັກງານຂອງບໍລິສັດຊີມັງລາວ ມະຫາຊົນຄືນໃໝ່ກ່ອນເດືອນພຶດສະພາ 2023.

ວາລະທີ 04: ພິຈາລະນາ ແລະຮັບຮອງການປ່ຽນ ຂະແໜງທຸລະກິດ ແລະ ປ່ຽນຊື່ບໍລິສັດ.

ວາລະທີ 05: ການພິຈາລະນາ ແລະຮັບຮອງສະເໜີຕໍ່ຂັ້ນເທິງ ເພື່ອເລືອກເອົາສະຖານທີ່ ແລະ ອາຄານ ໂຮງງານຊີມັງວັງວຽງ ຫຼັງທີ 01 ເຂົ້າຮ່ວມກັບໂຄງການທ່ອງທ່ຽວ ແລະ ວັດທະນະທຳຂອງ ບໍລິສັດ ຊີມັງລາວ ມະຫາ ຊົນ.

ວາລະທີ 06: ພິຈາລະນາ ແລະຮັບຮອງການສ້າງຂໍ້ກຳນົດ - ກົດລະບຽບ ແລະໂຄງຮ່າງການຈັດຕັ້ງ ຂອງບໍລິສັດ ຊີມັງລາວ ມະຫາຊົນຄືນໃໝ່.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ຊີມັງລາວ ມະຫາຊົນ

ຜູ້ອຳນວຍການບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ